ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------

ນາຍົກລັດຖະມົນຕີ

ເລກທີ 08 /ນຍ.

ນະຄອນຫຼວງວຽງຈັນ, ວັນທີ20ກຸມພາ 2014.

# ຄຳສັ່ງແນະນຳ

## ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດສົ່ງພະນັກງານ ແລະ ນັກຮຽນ ໄປຍົກລະດັບຕ່າງໆຢູ່ ສສ ຫວຽດນາມ ດ້ວຍແຫຼ່ງທຶນຕ່າງໆ

ເຖິງ: ບັນດາທ່ານ ລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການທຽບເທົ່າ ຂັ້ນສູນກາງ, ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງໃນທົ່ວປະເທດ.

- ເພື່ອເສີມຂະຫຍາຍການຈັດຕັ້ງປະຕິບັດໂຄງການ "ຍົກສູງຄຸນນະພາບ ແລະ ປະສິດທິຜົນການຮ່ວມມືລາວ-ຫວຽດນາມ ໃນຂົງເຂດການສຶກສາ ແລະ ພັດທະນາຊັບພະຍາກອນມະນຸດໃນໄລຍະ 2011-2020" ໃຫ້ໄດ້ຮັບຜົນດີ.
- ເພື່ອເຮັດໃຫ້ແຈ້ງການ ຂອງ ຫ້ອງວ່າການລັດຖະບານ ສະບັບເລກທີ 1711/ຄລບ, ວັນທີ 21 ມັງກອນ 2009. ໃຫ້ໄດ້ຮັບຜົນດີ.

## ນາຍົກລັດຖະມົນຕີ ອອກຄຳສັ່ງແນະນຳ:

1. ໃຫ້ບັນດາທ່ານລັດຖະມົນຕີວ່າການກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ, ເຈົ້າແຂວງ ແລະ ອົງການທຽບເທົ່າ ຊີ້ນຳບັນດາອົງການຈັດຕັ້ງ ແລະ ພາກສ່ວນຕ່າງໆທີ່ມີແຜນຈະສົ່ງພະນັກງານຂະແໜງການຕ່າງໆທີ່ ສສ ຫວຽດນາມນັ້ນ. ຈົ່ງໄດ້ສ້າງແຜນກໍ່ສ້າງທັງໄລຍະສັ້ນ ແລະ ໄລຍະຍາວໂດຍສົມທົບກັບກະຊວງສຶກສາທິການ ແລະ ກິລາ.
2. ການຄັດເລືອກເອົາພະນັກງານ-ນັກຮຽນ ໄປຮຽນຕໍ່ສາຂາວິຊາຕ່າງໆ ທີ່ ສສ ຫວຽດນາມ ໃນທຸກກໍລະນີທຸກແຫຼ່ງທຶນນັ້ນ ສະເໜີໃຫ້ບັນດາທ່ານລັດຖະມົນຕີວ່າການກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ, ເຈົ້າແຂວງ ແລະ ອົງການທຽບເທົ່າ ຊີ້ນຳພາກສ່ວນກ່ຽວຂ້ອງຈັດຕັ້ງການສອບເສັງ, ຄັດເລືອກຕາມລະບຽບການຢ່າງເຂັ້ມງວດ ແລ້ວລາຍງານຜົນການຄັດເລືອກນັ້ນໃຫ້ກະຊວງສຶກສາທິການ ແລະ ກິລາຮັບຊາບ (ຖ້າບໍ່ມີຜົນການສອບເສັງຄັດເລືອກ ກະຊວງສຶກສາທິການ ແລະ ກິລາຈະບໍ່ອອກຂໍ້ຕົກລົງອະນຸມັດໃຫ້ໄປຮຽນ).

3. ການສັບຊ້ອນຂະແໜງວິຊາຮຽນຕ່າງໆ ຕ້ອງເລີ່ມຈາກຄວາມຕ້ອງການພັດທະນາເສດຖະກິດ, ແຜນກຳນົດສ້າງພະນັກງານຈາກພາກສ່ວນສູນກາງກໍຄືທ້ອງຖິ່ນ, ພ້ອມກັນນັ້ນກໍຕ້ອງສອດຄ່ອງກັບເງື່ອນໄຂຄວາມສາມາດຮັບຮອງຕົວຈິງຂອງຝ່າຍຫວຽດນາມໃນແຕ່ລະປີ.
4. ພາຍຫຼັງການສອບເສັງ ແລະ ຄັດເລືອກແລ້ວ ໃຫ້ຊີ້ນຳພາກສ່ວນກ່ຽວຂ້ອງນຳສະເໜີລາຍຊື່ ພ້ອມປະກອບເອກະສານຕ່າງໆຕາມລະບຽບການຈັດສົ່ງພະນັກງານໄປຮຽນຕ່າງປະເທດ ຂອງກະຊວງສຶກສາທິການ ແລະ ກິລາ ເພື່ອສະເໜີອອກຂໍ້ຕົກລົງອະນຸມັດໃຫ້ໄປຮຽນເປັນທາງການ, ຖ້າພະນັກງານ-ນັກຮຽນໄປຮຽນໂດຍບໍ່ມີຂໍ້ຕົກລົງ ຂອງ ກະຊວງສຶກສາທິການ ແລະ ກິລາ ທາງກະຊວງສຶກສາ ແລະ ກໍ່ສ້າງ ສສ ຫວຽດນາມ ຈະບໍ່ຮັບຮູ້ ແລະ ບໍ່ອອກປະກາສະນີຍະບັດໃຫ້.
5. ການຈັດສົ່ງພະນັກງານ-ນັກຮຽນໄປຮຽນທີ່ ສສ ຫວຽດນາມ ນັ້ນໃຫ້ບັນດາທ່ານ ລັດຖະມົນຕີວ່າການກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ, ເຈົ້າແຂວງ ແລະ ອົງການທຽບເທົ່າ ຊີ້ນຳພາກສ່ວນຮັບຜິດຊອບຈົ່ງປະຕິບັດຕາມຂໍ້ຕົກລົງວ່າດ້ວຍລະບຽບຄຸ້ມຄອງນັກຮຽນ ນັກສຶກສາໄປຮຽນທີ່ຕ່າງປະເທດ ຂອງ ສປປ ລາວ ຢ່າງເຂັ້ມງວດ.
6. ໃນເວລາຈັດຕັ້ງປະຕິບັດຕົວຈິງ ຖ້າຫາກມີບັນຫາໃດພົບຄວາມຫຍຸ້ງຍາກ ໃຫ້ລາຍງານຕໍ່ກະຊວງສຶກສາທິການ ແລະ ກິລາ ເພື່ອມີທິດຊີ້ນຳ ແລະ ແກ້ໄຂໃຫ້ທັນເວລາ.
7. ຄຳສັ່ງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ